ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ເລກທີ 1258 /ກສ

ນະຄອນຫຼວງວຽງຈັນ, ວັນທີ 12 SEP 2025

# ຂໍ້ຕົກລົງ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສູນສາທິດ ແລະ ບໍລິການເຕັກນິກກະສິກຳ ຮ່ວມມື ລາວ-ຈີນ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ການຕົກລົງ ຂອງກອງປະຊຸມຄະນະປະຈຳພັກກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຄັ້ງວັນທີ 29 ສິງຫາ 2025.

**ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສູນສາທິດ ແລະ ບໍລິການເຕັກນິກກະສິກຳ ຮ່ວມມື ລາວ-ຈີນ ແນໃສ່ຈັດຕັ້ງປະຕິບັດວຽກງານຜະລິດ-ສະໜອງແນວພັນພືດ-ສັດ, ການຝຶກອົບຮົມ, ສາທິດ, ບໍລິການເຕັກນິກວິຊາການ ກ່ຽວກັບການປູກ-ການລ້ຽງ ຕາມທິດກະສິກຳສະອາດ ໃຫ້ມີປະສິດທິຜົນສູງ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ສູນສາທິດ ແລະ ບໍລິການເຕັກນິກກະສິກຳ ຮ່ວມມື ລາວ-ຈີນ ຂຽນເປັນຕົວອັກສອນຫຍໍ້ວ່າ **"ສສກ"** ແມ່ນກົງຈັກການຈັດຕັ້ງໜຶ່ງ ທີ່ເປັນຫົວໜ່ວຍວິຊາການລະດັບສອງ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ, ມີພາລະບົດບາດໃນການຜະລິດ, ສະໜອງ ແລະ ບໍລິການດ້ານແນວພັນພືດ, ສັດ, ສັດນ້ຳ, ພັດທະນາເຕັກນິກ-ເຕັກໂນໂລຊີກະສິກຳທັນສະໄໝ; ສາທິດການປູກ, ການລ້ຽງ, ສະໜອງການຝຶກອົບຮົມ ເພື່ອຊຸກຍູ້, ສົ່ງເສີມ ການຜະລິດສະບຽງອາຫານ ແລະ ຜະລິດສິນຄ້າ, ການປຸງແຕ່ງຜະລິດຕະພັນ ຂອງຊາວກະສິກອນ, ກຸ່ມຜູ້ຜະລິດ ແລະ ຜູ້ປະກອບການ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ສູນສາທິດ ແລະ ບໍລິການເຕັກນິກກະສິກຳ ຮ່ວມມື ລາວ-ຈີນ ມີໜ້າທີ່ ດັ່ງນີ້:

1. ປະຕິບັດກົດໝາຍ, ດຳລັດ, ນິຕິກຳຕ່າງໆ ຂອງຂັ້ນເທິງ ແລະ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ;
2. ຄົ້ນຄວ້າ, ເຊື່ອມຊຶມ ແລະ ເຜີຍແຜ່ ແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານກະສິກຳ ແລະ ສິ່ງແວດລ້ອມ;
3. ສ້າງຮ່າງແຜນຍຸດທະສາດ, ນະໂຍບາຍ, ສ້າງແຜນງານ, ແຜນການ ແລະ ໂຄງການ ກ່ຽວກັບວຽກງານການພັດທະນາ ແລະ ບໍລິການດ້ານແນວພັນພືດ, ສັດ, ສັດນ້ຳ, ເຕັກນິກ-ເຕັກໂນໂລຊີກະສິກຳສະອາດ ແລະ ກະສິກຳທີ່ດີ ເພື່ອສະເໜີລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນາ ພ້ອມທັງຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
4. ປັບປຸງ ແລະ ພັດທະນາ ສູນໃຫ້ເຂັ້ມແຂງ, ຮັບປະກັນການເຄື່ອນໄຫວວຽກງານໃຫ້ມີປະສິດທິພາບ ກາຍເປັນຕົວແບບດ້ານການປູກ-ການລ້ຽງ, ເປັນບ່ອນຜະລິດ ແລະ ສະໜອງແນວພັນ, ເປັນສູນຝຶກປະຕິບັດຕົວຈິງ, ທັດສະນະສຶກສາ, ຮຽນຮູ້, ຖອດຖອນບົດຮຽນ ຂອງຊາວກະສິກອນ, ຜູ້ປະກອບການ, ພະນັກງານ, ນັກຮຽນ, ນັກສຶກສາ ແລະ ເຍົາວະຊົນ;
5. ຈັດຕັ້ງປະຕິບັດແຜນງານ ແລະ ໂຄງການຮ່ວມມືດ້ານກະສິກຳ ລະຫວ່າງ ລັດຖະບານ ສປປ ລາວ ແລະ ສປ ຈີນ ພ້ອມທັງຊຸກຍູ້, ສົ່ງເສີມການຜະລິດສະບຽງອາຫານ, ການຜະລິດເປັນສິນຄ້າ ຂອງປະຊາຊົນ ພາຍໃນ 10 ແຂວງພາກເໜືອ ແລະ ພາກກາງຈຳນວນໜຶ່ງ ໂດຍຊຸກຍູ້, ສົ່ງເສີມການຜະລິດ, ການປຸງແຕ່ງແບບສັນຍາຜູກພັນສອງສົ້ນ ແລະ ແບບທຸລະກິດຮ່ວມມື ຂອງປະຊາຊົນ;
6. ດຳເນີນການທົດສອບ, ທົດລອງ, ສາທິດ ແລະ ພັດທະນາ ເຕັກນິກກະສິກຳທີ່ທັນສະໄໝ ແນໃສ່ຍົກສະມັດຕະພາບ ແລະ ຄຸນນະພາບຜົນຜະລິດກະສິກຳ ຂອງບັນດາລາຍການພືດ-ສັດ ທີ່ນອນໃນບັນຊີສົ່ງເສີມການຜະລິດທົດແທນການນຳເຂົ້າ ແລະ ບັນຊີພືດ-ສັດ ທີ່ມີການເຊັນສັນຍາສຸຂານາໄມ ແລະ ສຸຂານາໄມພືດ (SPS) ກັບປະເທດ ສປ ຈີນ ແລະ ປະເທດອື່ນໆ ຢູ່ພາຍໃນສູນ ແລະ ຄອບຄົວຕົວແບບ ເພື່ອເປັນບ່ອນຮຽນຮູ້, ຖອດຖອນບົດຮຽນ ໃຫ້ແກ່ຊາວກະສິກອນ, ກຸ່ມຜູ້ຜະລິດ, ສະຫະກອນ, ຜູ້ປະກອບການ ແລະ ນັກຮຽນ-ນັກສຶກສາ;
7. ຜະລິດ-ສະໜອງ ແລະ ບໍລິການດ້ານແນວພັນພືດ, ສັດ, ສັດນ້ຳ, ເຕັກນິກ-ເຕັກໂນໂລຊີ ກະສິກຳທີ່ດີ ກ່ຽວກັບບັນດາພືດ-ສັດ ທີ່ນອນໃນບັນຊີສົ່ງເສີມການຜະລິດ ທົດແທນການນຳເຂົ້າ ແລະ ບັນຊີພືດ-ສັດ ທີ່ມີການເຊັນສັນຍາ ສຸຂານາໄມ ແລະ ສຸຂານາໄມພືດ ກັບປະເທດ ສປ ຈີນ ແລະ ປະເທດອື່ນໆ ໃຫ້ບໍລິສັດ, ຜູ້ປະກອບການ, ສະຫະກອນ, ກຸ່ມຜູ້ຜະລິດ, ຄອບຄົວຕົວແບບ ແລະ ຊາວກະສິກອນ;
8. ພັດທະນາຫ້ອງວິໄຈ, ວັດຖຸອຸປະກອນວິທະຍາສາດ, ສິ່ງອຳນວຍຄວາມສະດວກ, ສະຖານທີ່ທົດສອບ ກ່ອນການນຳໃຊ້ແນວພັນຈາກຕ່າງປະເທດ PEQ Greenhouse ເພື່ອເຝົ້າລະວັງ, ກວດກາ, ວິໄຈ ພ້ອມທັງຢັ້ງຢືນທາງດ້ານວິທະຍາສາດ ສຳລັບປັດໄຈການຜະລິດ ແລະ ຜົນຜະລິດກະສິກຳ;
9. ພັດທະນາ ຄູ່ມືເຕັກນິກວິຊາການ, ເຄື່ອງມືສື່ສານ ແລະ ການຝຶກອົບຮົມເຜີຍແຜ່ໃຫ້ແກ່ວິຊາການ ຂັ້ນແຂວງ, ເມືອງ, ເຄືອຂ່າຍຊາວກະສິກອນ, ຜູ້ປະກອບການ, ນັກຮຽນ ແລະ ນັກສຶກສາ;

10. ປະກອບສ່ວນໃນການສະໜັບສະໜູນ ແລະ ອຳນວຍຄວາມສະດວກ ດ້ານສະຖານທີ່, ເຕັກນິກວິຊາການ, ອາຈານທີ່ປຶກສາ ສຳລັບນັກສຶກສາ ແລະ ນັກຮຽນຝຶກງານ ຈາກມະຫາວິທະຍາໄລ, ວິທະຍາໄລ ແລະ ໂຮງຮຽນວິຊາຊີບກະສິກຳໃນຂອບເຂດທົ່ວປະເທດ ລວມທັງການແລກປ່ຽນນັກຄົ້ນຄວ້າ, ງານວິໄຈ ລະຫວ່າງປະເທດ;
11. ເກັບກຳ ແລະ ສັງລວມ ຂໍ້ມູນຂ່າວສານ ດ້ານການຝຶກອົບຮົມຈາກພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ເພື່ອສ້າງເປັນເອກະສານປະກອບ, ສ້າງຫ້ອງສະໝຸດ, ວາລະສານ, ຖານຂໍ້ມູນ, ເວັບໄຊ ເພື່ອເຜີຍແຜ່ຜ່ານສື່ມວນຊົນ ໂດຍການປະສານສົມທົບກັບກົມສົ່ງເສີມກະສິກຳ ແລະ ສະຫະກອນ, ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ, ກົມຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການ ຂອງຜູ້ຊົມໃຊ້ ໃນແຕ່ລະໄລຍະ;
12. ຮ່ວມກັບບັນດາກົມວິຊາການກ່ຽວຂ້ອງ ແລະ ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ບັນດາແຂວງ ໃນການຕິດຕາມ, ເຝົ້າລະວັງ, ແຈ້ງເຕືອນ ແລະ ດຳເນີນ ການຕອບໂຕ້ສຸກເສີນ ຕໍ່ການລະບາດຂອງສັດຕູພືດ ແລະ ພະຍາດສັດໃນ 10 ແຂວງພາກເໜືອ ແລະ ພາກກາງຈຳນວນໜຶ່ງ;
13. ປະສານສົມທົບ ແລະ ຮ່ວມມືກັບ ສປ ຈີນ ແລະ ຄູ່ຮ່ວມພັດທະນາອື່ນ ເພື່ອຍາດແຍ່ງການຊ່ວຍເຫຼືອດ້ານທຶນຮອນ, ເຕັກນິກ ແບບແຜນວິທີການຄຸ້ມຄອງ ແນໃສ່ພັດທະນາສູນໃຫ້ມີຄວາມເຂັ້ມແຂງ; ສ້າງກົນໄກປະສານສົມທົບກັບຫ້ອງການ, ບັນດາກົມ, ສະຖາບັນ, ສູນ ແລະ ຄູ່ຮ່ວມພັດທະນາອື່ນ ເພື່ອຍາດແຍ່ງການຊ່ວຍເຫຼືອດ້ານເຕັກນິກວິຊາການ;
14. ຂຶ້ນແຜນງົບປະມານ, ໂຄງການຈັດຕັ້ງປະຕິບັດ ຕາມເງື່ອນໄຂຕົວຈິງໃນ ແຕ່ລະໄລຍະ ເພື່ອສ້າງເງື່ອນໄຂ ໃຫ້ສູນ ສາມາດເຄື່ອນໄຫວ ແລະ ສ້າງລາຍຮັບດ້ານວິຊາການກ້າວໄປສູ່ການກຸ້ມຕົນເອງເທື່ອລະກ້າວ ພ້ອມທັງຕິດຕາມ, ກວດກາ, ສະຫຼຸບຕີລາຄາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານ ຂອງຕົນ ແລະ ລາຍງານໃຫ້ຂັ້ນເທິງ ຕາມລະບຽບຫຼັກການ;
15. ຄຸ້ມຄອງ ແລະ ນຳໃຊ້ບຸກຄະລະກອນ, ຊັບສົມບັດ, ພາຫະນະ, ວັດຖຸອຸປະກອນ ແລະ ງົບປະມານ ທີ່ໄດ້ຮັບອະນຸມັດ ຢ່າງມີຄວາມຮັບຜິດຊອບ ແລະ ມີປະສິດທິຜົນສູງ;
16. ປະກອບສ່ວນເຂົ້າໃນການພັດທະນາບັນດາວິທະຍາໄລ ທີ່ຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ ພ້ອມທັງສະໜອງດ້ານເຕັກນິກ, ວິຊາການ ແລະ ສິ່ງອຳນວຍຄວາມ ສະດວກຕ່າງໆ ໃຫ້ບັນດາສູນ, ສະຖານີ ຢູ່ຂັ້ນທ້ອງຖິ່ນ ໃຫ້ມີຄວາມເຂັ້ມແຂງ;
17. ສັງລວມ, ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ຂອງສູນ ໃຫ້ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ ເປັນປົກກະຕິ ແລະ ທັນເວລາ;
18. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີ, ຮອງລັດ ຖະມົນຕີ ຜູ້ຊີ້ນຳ.

### ມາດຕາ 4 ຂອບເຂດສິດ

ສູນສາທິດ ແລະ ບໍລິການເຕັກນິກກະສິກຳ ຮ່ວມມື ລາວ-ຈີນ ມີສິດ ດັ່ງນີ້:

1. ສະເໜີປັບປຸງກົງຈັກການຈັດຕັ້ງ ຂອງຕົນ ຕໍ່ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ, ກຳນົດຕຳແໜ່ງງານບັນຈຸ-ສັບຊ້ອນ ແລະ ຈັດວາງບຸກຄະລາກອນ ຕາມການແບ່ງຂັ້ນຄຸ້ມຄອງທີ່ກົດໝາຍ ແລະລະບຽບການກຳນົດ ຕາມທິດກະທັດຮັດ, ເຂັ້ມແຂງ ແລະ ມີປະສິດທິພາບ;
2. ຊີ້ນຳການຈັດຕັ້ງປະຕິບັດ, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການເຄື່ອນໄຫວ ຂອງບັນດາຂະແໜງການ ທີ່ຂຶ້ນກັບສູນ ພ້ອມທັງກຳນົດລະບອບແບບແຜນວິທີເຮັດວຽກພາຍໃນສູນ ໃຫ້ແທດເໝາະກັບວຽກງານ ໃນແຕ່ລະໄລຍະ;

3. ເຊັນສັນຍາຜູກພັນສອງສົ້ນກັບ ນິຕິບຸກຄົນ, ນັກລົງທຶນ, ຜູ້ປະກອບການ ແລະ ຊາວກະສິກອນ ເພື່ອບໍລິການດ້ານເຕັກນິກວິຊາການ ຕາມການອະນຸມັດ ຂອງກະຊວງ ເຊັ່ນ: ການທົດສອບ, ກວດກາ, ວິໄຈ ແລະ ຢັ້ງຢືນ ທາງດ້ານວິທະຍາສາດຕໍ່ປັດໄຈການຜະລິດ ແລະ ຜົນຜະລິດກະສິກຳ ແລະ ມີສິດໄດ້ຮັບຜົນການແບ່ງປັນ ຈາກການບໍລິການດັ່ງກ່າວ ທີ່ສົມເຫດສົມຜົນ; ດຶງເອົາເຄືອຂ່າຍຊາວກະສິກອນລາວ, ກຸ່ມຜູ້ຜະລິດ ຫຼື ສະຫະກອນ ເຂົ້າເປັນພາຄີ, ເປັນຄູ່ຮ່ວມພັດທະນາ ເພື່ອໃຫ້ການບໍລິການຕິດພັນກັບຕະຫຼາດ ແລະ ການຜະລິດສິນຄ້າ;
4. ປະສານສົມທົບວຽກງານຕ່າງໆ ກັບຫ້ອງການ, ບັນດາກົມ, ສະຖາບັນ ແລະ ທີ່ວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ, ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ບັນດາແຂວງ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດພາລະບົດບາດ, ໜ້າທີ່ ຂອງສູນໃຫ້ມີປະສິດທິຜົນສູງ;
5. ຈັດຝຶກອົບຮົມ, ຍົກລະດັບຂີດຄວາມສາມາດ ດ້ານວິຊາການກະສິກຳ ແລະ ປ່າໄມ້ ໃຫ້ແກ່ວິຊາການ ຂອງສູນ ພ້ອມທັງຕິດຕາມ, ຊຸກຍູ້ຂະບວນການຖ່າຍທອດບົດຮຽນໃຫ້ຊາວກະສິກອນ, ກຸ່ມຜູ້ຜະລິດ ແລະ ຜູ້ປະກອບການ ດ້ານກະສິກຳຕາມແຜນ ທີ່ໄດ້ຮັບການອະນຸມັດ;
6. ຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ຊັບສິນຂອງລັດ, ຈັດຕັ້ງປະຕິບັດພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນ ຕາມກົດໝາຍ ແລະ ລະບຽບການ ກຳນົດໄວ້;
7. ນຳພາ-ຊີ້ນຳ ຈັດຕັ້ງປະຕິບັດການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການເຄື່ອນໄຫວ ຂອງບັນດາຂະແໜງ ທີ່ຂຶ້ນກັບສູນ ຂອງຕົນ;
8. ຄົ້ນຄວ້າ, ນຳສະເໜີກົດລະບຽບ ພາຍໃນສູນຂອງຕົນ ເພື່ອຮັບປະກັນວຽກງານທາງລັດຖະການ, ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະຫງົບປອດໄພ ພາຍໃນສູນຂອງຕົນ ເປັນຢ່າງດີ;
9. ພົວພັນຮ່ວມມື, ແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ຜົນສຳເລັດທາງວິທະຍາສາດ ແລະ ເຕັກນິກ-ເຕັກໂນໂລຊີ ກັບບັນດາກົມ, ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ, ສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີຊີວະພາບ, ສະຖາບັນການສຶກສາດ້ານກະສິກຳ-ສິ່ງແວດລ້ອມ ແລະ ອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ;
10. ເຂົ້າຮ່ວມປະຊຸມ, ສຳມະນາ, ຝຶກອົບຮົມ ແລະ ທັດສະນະສຶກສາ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ ຂອງຂັ້ນເທິງ;
11. ຈັດຝຶກອົບຮົມ ແລະ ບໍລິການຝຶກອົບຮົມ ໃຫ້ແກ່ພາກສ່ວນອື່ນໆ ຕາມຄວາມເໝາະສົມ ແລະ ມອບໃບຢັ້ງຢືນ ໃຫ້ແກ່ນັກສຳມະນາກອນຝຶກອົບຮົມ ແຕ່ລະຊຸດ;
12. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນຳ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ສູນສາທິດ ແລະ ບໍລິການເຕັກນິກກະສິກຳ ຮ່ວມມື ລາວ-ຈີນ ມີໂຄງປະກອບກົງຈັກ ດັ່ງນີ້:

1. ຂະແໜງແຜນການ
2. ຂະແໜງປູກຝັງ
3. ຂະແໜງລ້ຽງສັດ
4. ຂະແໜງວິໄຈພືດ

**ມາດຕາ 6 ໂຄງປະກອບດ້ານບຸກຄະລາກອນ**

ສູນສາທິດ ແລະ ບໍລິການເຕັກນິກກະສິກຳ ຮ່ວມມື ລາວ-ຈີນ ມີໂຄງປະກອບດ້ານບຸກຄະລາກອນ ດັ່ງນີ້:

1. ຫົວໜ້າສູນ ຈຳນວນ 01 ທ່ານ ຮັບຜິດຊອບຕໍ່ ລັດຖະມົນຕີ ແລະ ຮອງລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການປະຕິບັດວຽກງານ ຂອງຕົນ.

   ໃນເວລາຫົວໜ້າສູນ ຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າສູນ ທ່ານໃດໜຶ່ງ ຮັກສາການແທນ.

2. ຮອງຫົວໜ້າສູນຈຳນວນໜຶ່ງ ຊ່ວຍຫົວໜ້າສູນ ຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ຫົວໜ້າສູນ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ຂອງວຽກງານທີ່ຕົນຊີ້ນຳ.

   ຮອງຫົວໜ້າສູນ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດ ໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າສູນ ພາຍຫຼັງກັບມາປະຈຳການ.

3. ຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

   ສຳລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ໜ້າທີ່ ຂອງບັນດາຂະແໜງ

**ມາດຕາ 7 ໜ້າທີ່ ຂອງຂະແໜງແຜນການ**

ຂະແໜງແຜນການ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍຍຸດທະສາດ ພັດທະນາກະສິກຳ, ພັດທະນາຊົນນະບົດ ແລະ ແຜນການພັດທະນາສູນ ເປັນແຜນການ ແລະ ໂຄງການລະອຽດ;
2. ຄົ້ນຄວ້າ, ກຳນົດຕຳແໜ່ງງານ ແລະ ກຳນົດ ຈຳນວນພະນັກງານ-ລັດຖະກອນ ເພື່ອເປັນບ່ອນອີງໃຫ້ແກ່ສູນ ໃນການນຳສະເໜີປັບປຸງກົງຈັກການຈັດຕັ້ງ ໃຫ້ແທດເໝາະກັບຄວາມເປັນຈິງ; ຂຶ້ນແຜນການກໍ່ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ, ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະເໜີບັນຈຸ-ສັບຊ້ອນ, ຍົກຍ້າຍ, 4

ເລື່ອນຊັ້ນ-ຂັ້ນເງິນເດືອນ, ປະຕິບັດນະໂຍບາຍຕ່າງໆ ແລະ ລົງວິໄນ ຕໍ່ພະນັກງານ-ລັດຖະກອນ ຕາມກົດໝາຍ ແລະ ລະບຽບການກຳນົດໄວ້;

3. ຄຸ້ມຄອງ, ຈໍລະຈອນ ເອກະສານຂາເຂົ້າ-ຂາອອກ, ຄຸ້ມຄອງຕາປະທັບຂອງສູນ ແລະ ເກັບຮັກສາເອກະສານທາງລັດຖະການ ຕາມຫຼັກການ ແລະ ລະບຽບກົດໝາຍ;
4. ສ້າງລະບຽບການຄຸ້ມຄອງນຳໃຊ້ ແລະ ຂຶ້ນບັນຊີຊັບສິນບັດ, ວັດຖຸອຸປະກອນ, ພາຫະນະ ເພື່ອຄຸ້ມຄອງການນຳໃຊ້ບໍ່ໃຫ້ຕົກເຮ່ຍເສຍຫາຍ ແລະ ນຳໃຊ້ຢ່າງມີປະສິດທິຜົນສູງ;
5. ສ້າງລະບຽບການຄຸ້ມຄອງພາຍໃນສູນ ແລະ ການເຄື່ອນໄຫວບໍລິການ ໃຫ້ມີຄວາມເໝາະສົມ ແຕ່ລະໄລຍະ ແນໃສ່ການຜັນຂະຫຍາຍຮູບແບບການພັດທະນາຊົນນະບົດແບບມີສ່ວນຮ່ວມ ຂອງຊຸມຊົນ;
6. ຕິດຕາມ ແລະ ຊຸກຍູ້ການປະເມີນຜົນການຄຸ້ມຄອງນຳໃຊ້ສູນ, ການເຄື່ອນໄຫວຝຶກອົບຮົມ ໃຫ້ມີຄວາມສະຫງົບເປັນລະບຽບຮຽບຮ້ອຍດີ ແລະ ສະອາດງາມຕາ;
7. ຄົ້ນຄວ້າ, ນຳສະເໜີ ກົດລະບຽບພາຍໃນສູນ ຂອງຕົນ ເພື່ອຮັບປະກັນວຽກງານທາງລັດຖະການ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະຫງົບປອດໄພ ພາຍໃນສູນຂອງຕົນ ເປັນຢ່າງດີ;
8. ສ້າງໂຄງການ ແລະ ຂຶ້ນແຜນງົບປະມານ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ ເພື່ອຈັດຕັ້ງປະຕິບັດຕາມເງື່ອນໄຂຕົວຈິງ ໃນແຕ່ລະໄລຍະ ແລະ ສ້າງແຜນການເຄື່ອນໄຫວຝຶກອົບຮົມໄລຍະສັ້ນ, ກາງ ແລະ ໄລຍະຍາວ;
9. ສ້າງກົນໄກ ແລະ ຮ່ວມມືກັບພາກລັດ, ຫົວໜ່ວຍທຸລະກິດເອກະຊົນ, ຜູ້ປະກອບການ, ສະຖາບັນການສຶກສາ ແລະ ບັນດາຄູ່ຮ່ວມພັດທະນາ ທັງພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນຄວາມຮູ້, ປະສົບການດ້ານເຕັກນິກວິຊາການ, ການສາທິດ ພ້ອມທັງຍາດແຍ່ງການຊ່ວຍເຫຼືອດ້ານທຶນຮອນ, ເຄື່ອງມືອຸປະກອນການຜະລິດ ເພື່ອຜັນຂະຫຍາຍຮູບແບບການພັດທະນາຊົນນະບົດ ແບບມີສ່ວນຮ່ວມ ແລະ ເປັນເຈົ້າການ ຂອງຊຸມຊົນ ໃຫ້ກວ້າງຂວາງ;
10. ຄຸ້ມຄອງວຽກງານເງິນເດືອນ, ຄັງເງິນສົດ, ບັນຊີຍ່ອຍ, ບັນຊີຄູ່, ການຄິດໄລ່ ແລະ ກວດກາແຜນ, ສະຫຼຸບລາຍຮັບ-ລາຍຈ່າຍ ງົບປະມານ ທຸກພາກ, ທຸກຮ່ວງ ທີ່ຂຶ້ນກັບສູນ ຢ່າງເປັນປົກກະຕິ ລວມທັງຕິດ ຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດໂຄງການ ຕາມແຜນການທີ່ສູນຮັບຜິດຊອບ;
11. ປະກອບເອກະສານໃນການສ້າງແຜນ ແລະ ການສະຫຼຸບການປະຕິບັດໂຄງການຕາມລະບຽບການເງິນ ແລະ ງົບປະມານ ທີ່ສູນຮັບຜິດຊອບ ເພື່ອລາຍງານຂັ້ນເທິງຊາບ ຢ່າງເປັນລະບົບ;
12. ພັດທະນາລະບົບເຕັກໂນໂລຊີຖານຂໍ້ມູນຂ່າວສານ ຂອງສູນ ທີ່ສາມາດເຊື່ອມໂຍງກັບບັນດາຂະແໜງການວິຊາການ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມ 10 ແຂວງ ພາກເໜືອ ແລະ ພາກກາງ ເຊັ່ນ: ວັດຖຸອຸປະກອນສິ່ງອຳນວຍຄວາມສະດວກ ເພື່ອຮັບໃຊ້ເຂົ້າໃນ ກອງປະຊຸມ, ສຳມະນາ ແລະ ຝຶກອົບຮົມວິຊາການ: ຫ້ອງຝຶກອົບຮົບ, ພັດທະນາຫ້ອງວາງສະແດງ, ຫ້ອງສະໝຸດອອນລາຍ, ອຸປະກອບສື່ສານ ເພື່ອເປັນແຫຼ່ງຂໍ້ມູນໃຫ້ແກ່ນັກວິຊາການ, ນັກຮຽນ-ນັກສຶກສາ ແລະ ຊາວກະສິກອນ ສາມາດເຂົ້າເຖິງໄດ້ງ່າຍ;
13. ຄຸ້ມຄອງ, ນຳໃຊ້ ແລະ ປັບປຸງ ເຮືອນພັກພະນັກງານ, ເຮືອນພັກນັກຝຶກອົບຮົມ, ເຮືອນຄົວ-ຫ້ອງອາຫານ, ພາຫະນະ ເພື່ອເປັນສິ່ງອຳນວຍຄວາມສະດວກໃຫ້ ນັກວິຊາການ, ນັກຮຽນ-ນັກສຶກສາ ແລະ ຊາວກະສິກອນ ທີ່ມາຝຶກອົບຮົມໄລຍະສັ້ນ ແລະ ໄລຍະຍາວ;
14. ສັງລວມ ແລະ ຮຽບຮຽງ ຜົນການສຶກສາ, ການຄົ້ນຄວ້າທົດສອບພາກສະໜາມ ແລະ ຂໍ້ມູນເຕັກໂນໂລຊີ ແລະ ເຕັກໂນໂລຊີນະວັດຕະກຳໃໝ່ ຈາກພາຍໃນປະເທດ ແລະ ຕ່າງປະເທດ ເພື່ອພັດທະນາເປັນປຶ້ມຄູ່ມືແນະນຳການປະຕິບັດ ແລະ ເອກະສານວິຊາການຮັບໃຊ້ເຂົ້າໃນການສຳມະນາ, ການຝຶກອົບຮົມ ແລະ ທັດສະນະສຶກສາ;

15. ກໍານົດແຜນສໍາມະນາວິຊາການ, ຈັດຝຶກອົບຮົມ ແລະ ທັດສະນະສຶກສາ ໃຫ້ມີຄວາມຫຼາກຫຼາຍ, ຄົບຊຸດຕໍ່ເນື່ອງ ແລະ ແທດເໝາະກັບສະພາບຕົວຈິງ ໃນແຕ່ລະໄລຍະການຜະລິດ ເພື່ອຮັບປະກັນໃນການ ສ້າງຄວາມເຂັ້ມແຂງ ດ້ານຄວາມຮູ້ວິຊາການ ແລະ ປະສົບການ ໃຫ້ນັກສໍາມະນາກອນ ທີ່ມາຈາກບັນດາແຂວງ ແລະ ເມືອງ ໃນຂອບເຂດ 10 ແຂວງ ພາກເໜືອ ແລະ ພາກກາງ ຈໍານວນໜຶ່ງ;
16. ສ້າງບົດວິພາກເສດຖະກິດ ໃຫ້ແກ່ນັກລົງທຶນ ແລະ ຜູ້ປະກອບການ ທີ່ມາລົງທຶນ ໃນຂອບເຂດ 10 ແຂວງ ພາກເໜືອ ແລະ ພາກກາງ ຈໍານວນໜຶ່ງ ລວມທັງສຶກສາຕົ້ນທຶນການຜະລິດພືດ ແລະ ສັດ ແຕ່ລະຊະນິດ ທີ່ມີເປົ້າໝາຍຈໍາໜ່າຍ ພາຍໃນ ແລະ ສົ່ງອອກ; ວິເຄາະຈຸດແຂງ, ຈຸດອ່ອນ, ໂອກາດ ແລະ ຄວາມສ່ຽງ ຂອງພືດເສດຖະກິດຕ່າງໆ ເພື່ອເປັນຂໍ້ມູນໃຫ້ແກ່ກຸ່ມຜູ້ຜະລິດ, ຜູ້ປະກອບການ, ຊາວກະສິກອນ, ກຸ່ມເປົ້າໝາຍ ແລະ ພາກສ່ວນກ່ຽວຂ້ອງ;
17. ສ້າງ ແລະ ພັດທະນາຮ້ານຄ້າຜະລິດຕະພັນກະສິກໍາ ຂອງສູນ ແລະ ຂະຫຍາຍເຄືອຂ່າຍ ໃນຂອບເຂດ 10 ແຂວງ ພາກເໜືອ ແລະ ພາກກາງ ເພື່ອສະໜອງແນວພັນ, ຜະລິດຕະພັນ ແລະ ປັດໄຈການຜະລິດ ລວມທັງສ້າງກອງທຶນສະເພາະ ຮັບໃຊ້ເຂົ້າໃນກິດຈະກໍາດັ່ງກ່າວ ພ້ອມທັງພັດທະນາກາໝາຍ Logo, Barcode, QR code ເຂົ້າໃນການຄຸ້ມຄອງຜະລິດຕະພັນ ລວມທັງການສ້າງສື່ໂຄສະນາສິນຄ້າຜະລິດຕະພັນ ແລະ ລະບົບຂົນສົ່ງແຈກຢາຍ ໂດຍສົມທົບກັບຄູ່ຮ່ວມພັດທະນາ ຈາກປະເທດ ສປ ຈີນ ໃນການຜະລິດກະສິກໍາ ເປັນສິນຄ້າ ແລະ ອື່ນໆ;
18. ປະສານສົມທົບກັບບັນດາຂະແໜງຂອງສູນ ໃນການສ້າງແຜນການເຄື່ອນໄຫວປະຈໍາອາທິດ, 1 ເດືອນ, 3 ເດືອນ, 6 ເດືອນ ແລະ ປະຈໍາປີ ພ້ອມທັງເປັນເຈົ້າການຊຸກຍູ້, ຕິດຕາມການເຄື່ອນໄຫວສະຫຼຸບສັງລວມ ແລະ ລາຍງານສະພາບພົ້ນເດັ່ນ ປະຈໍາເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈໍາປີ, ກາງສະໄໝ ແລະ 5 ປີ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
19. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 8 ໜ້າທີ່ ຂອງຂະແໜງປູກຝັງ**

ຂະແໜງປູກຝັງ ມີໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍແຜນດໍາເນີນງານຂອງສູນ ໃຫ້ເປັນແຜນການ, ໂຄງການ, ກິດຈະກໍາ ເພື່ອຈັດຕັ້ງປະຕິບັດຕາມພາລະບົດບາດໜ້າທີ່ ຂອງຕົນ ໃຫ້ປະກົດຜົນເປັນຈິງ;
2. ທົດສອບ, ທົດລອງ, ສຶກສາ, ສາທິດ ແລະ ພັດທະນາ ເຕັກນິກການປູກພືດທີ່ທັນສະໄໝ, ການເລືອກເຟັ້ນແນວພັນທີ່ເໝາະສົມ ຄຽງຄູ່ກັບການທົດສອບ ແລະ ສຶກສາ ເຕັກນິກການນໍາໃຊ້ດິນແບບຍືນຍົງ ແລະ ຟື້ນຟູຄຸນນະພາບ ຂອງດິນເຊື່ອມໂຊມ ຈາກການປູກພືດ ແນໃສ່ຍົກສະມັດຕະພາບ ແລະ ຄຸນນະພາບ ຂອງຜົນຜະລິດ ເຊັ່ນ: ແນວພັນ ພືດ, ຜັກ, ໄມ້ໃຫ້ໝາກ, ໄມ້ດອກ, ໄມ້ປະດັບ ແລະ ແນວພັນພືດທີ່ຢູ່ໃນບັນຊີສົ່ງເສີມການຜະລິດ ທົດແທນການນໍາເຂົ້າ ແລະ ບັນຊີພືດທີ່ມີການເຊັນສັນຍາສຸຂານາໄມພືດກັບປະເທດ ສປ ຈີນ ແລະ ປະເທດອື່ນໆ ຢູ່ພາຍໃນສູນ, ຄອບຄົວຕົວແບບ ເພື່ອເປັນບ່ອນຮຽນຮູ້, ຖອດຖອນບົດຮຽນ ໃຫ້ແກ່ຊາວກະສິກອນ, ກຸ່ມຜູ້ຜະລິດ, ສະຫະກອນ, ຜູ້ປະກອບການ ແລະ ນັກຮຽນ-ນັກສຶກສາ;
3. ຜະລິດ-ສະໜອງ ແລະ ບໍລິການ ດ້ານແນວພັນພືດ, ຜັກ, ໄມ້ໃຫ້ໝາກ, ໄມ້ດອກ, ໄມ້ປະດັບ, ເຕັກນິກເຕັກໂນໂລຊີກະສິກໍາທີ່ດີ ກ່ຽວກັບບັນດາພືດ ທີ່ນອນໃນບັນຊີສົ່ງເສີມການຜະລິດ ທົດແທນການນໍາ ເຂົ້າ ແລະ ບັນຊີພືດທີ່ມີການເຊັນສັນຍາສຸຂານາໄມພືດ ກັບປະເທດ ສປ ຈີນ ແລະ ປະເທດອື່ນໆ ໃຫ້ຄອບຄົວຕົວແບບຊາວກະສິກອນ, ກຸ່ມຜູ້ຜະລິດ, ສະຫະກອນ ແລະ ຜູ້ປະກອບການ;

4. ສ້າງ ແລະ ພັດທະນາ ພື້ນຖານໂຄງລ່າງ, ວັດຖຸເຕັກນິກ ແລະ ເຄື່ອງມື ເພື່ອນຳໃຊ້ເຂົ້າໃນ ວຽກງານສຶກສາ ຄົ້ນຄວ້າ, ທົດສອບ, ສາທິດ, ຖ່າຍທອດເຕັກນິກວິຊາການ ແລະ ແລກປ່ຽນບົດຮຽນໃຫ້ແກ່ຊາວກະສິກອນ, ຜູ້ປະກອບການ, ນັກຮຽນ, ນັກວິໄຈ ເຊັ່ນ: ພັດທະນາຫ້ອງວິໄຈພືດ, ແປງສາທິດ, ວິໄຈ ຫຍ້າ-ວັດຊະພືດ ແລະ ຄຸນນະພາບປັດໄຈການຜະລິດ (ຝຸ່ນ, ຢາປາບສັດຕູ ພືດ, ວັດສະດຸປູກ, ນ້ຳ ແລະ ດິນ);
5. ປະສານງານ, ອຳນວຍຄວາມສະດວກ ແລະ ຮ່ວມມືກັບອົງການຄຸ້ມຄອງທີ່ກ່ຽວຂ້ອງ ຂອງປະເທດ ສປ ຈີນ, ຂະແໜງການພາຍໃນ ແລະ ຄູ່ຮ່ວມພັດທະນາ ໃນການຮ່ວມມື ທົດສອບຄຸນະພາບແນວພັນ, ສາທິດ ແລະ ພັດທະນາເຕັກນິກການປູກພືດທີ່ທັນສະໄໝ ແລະ ພ້ອມທັງກຳນົດກົນໄກປະຕິບັດການ ດ້ານວິຊາການ ຮ່ວມກັນ;
6. ແປ ແລະ ຮຽບຮຽງ ເອກະສານມາດຕະຖານສາກົນ ກ່ຽວກັບມາດຕະການດ້ານເຕັກນິກການຜະລິດພືດ ເປັນພາສາລາວ ເພື່ອນຳໃຊ້ເຂົ້າໃນການປະຕິບັດວຽກງານຕົວຈິງ; ສ້າງປຶ້ມຕຳລາ, ປຶ້ມຄູ່ມືແນະນຳປະຕິບັດ ດ້ານເຕັກນິກວິຊາການ ກ່ຽວກັບການປູກພືດຕ່າງໆ ທີ່ສະອາດ ປາສະຈາກສານເຄມີ ພ້ອມທັງການຂະຫຍາຍພັນພືດ, ສ້າງເປັນຄູ່ມືໃນການຝຶກອົບຮົມ ແລະ ເຜີຍແຜ່ໃຫ້ສັງຄົມໄດ້ຮັບຮູ້ຢ່າງກວ້າງຂວາງ ໂດຍຜ່ານສື່ຕ່າງໆ ທີ່ສາມາດເຂົ້າເຖິງໄດ້;
7. ສຶກສາລະບົບນິເວດວິທະຍາ ແລະ ການປັບໂຕ ຂອງສັດຕູພືດ ແລະ ພືດ ທີ່ເກີດຂຶ້ນໃນແຕ່ລະໄລຍະ ຂອງລະດູການຜະລິດ ເພື່ອກຳນົດແຜນປ້ອງກັນ ແລະ ແຜນປູກທີ່ເໝາະສົມ;
8. ສ້າງຄວາມເຂັ້ມແຂງ ແລະ ຂະຫຍາຍຕາໜ່າງປ້ອງກັນພືດ ເພື່ອສ້າງຄູຝຶກໝໍພືດ ຢູ່ຂັ້ນແຂວງທີ່ສູນຮັບຜິດຊອບ ພ້ອມທັງສຳຫຼວດ, ວິໄຈ, ຂຶ້ນບັນຊີ ແມງໄມ້, ເຊື້ອລາ, ຂີ້ກະເດືອນຝອຍ, ພືດສະໝຸນໄພ ທີ່ເປັນປະໂຫຍດ ເພື່ອສຶກສາ, ທົດສອບ, ເລືອກເຟັ້ນ ແລະ ຂະຫຍາຍເປັນຊີວະວິທະຍາ ນຳໃຊ້ເຂົ້າໃນການປ້ອງກັນພືດ ແບບປະສົມປະສານ ທົດແທນການນຳໃຊ້ສານເຄມີ;
9. ພັດທະນາເຕັກນິກການປ້ອງກັນ ແລະ ກຳຈັດສັດຕູພືດ ແບບຍືນຍົງ ແລະ ມີປະສິດທິພາບສູງ ເຊັ່ນ: ການນຳໃຊ້ໂດຼນ ເຂົ້າໃນການສຳຫຼວດເຝົ້າລະວັງ ແລະ ສີດພົ່ນ ເຊື້ອຊີວະວິທະຍາ, ຢາປາບສັດຕູພືດ; ການນຳໃຊ້ FAMEWS Application ແລະ ໂປຼແກຼມອື່ນ ເຂົ້າໃນການຕິດຕາມ ແລະ ກຳນົດແຜນ ທີ່ການລະບາດສັດຕູພືດ;
10. ພະຍາກອນກ່ອນການລະບາດສັດຕູພືດ, ໂດຍການພັດທະນາລະບົບການແຈ້ງເຕືອນ Early warning ລວມທັງກຽມຄວາມພ້ອມໃນການຕອບໂຕ້ສຸກເສີນ Rapid response ກໍລະນີເກີດການລະບາດສັດຕູພືດ;
11. ພັດທະນາ ຫ້ອງປະຕິບັດການ, ສະຖານທີ່ ແລະ ອຸປະກອນຮັບໃຊ້ ໃນການລ້ຽງຂະຫຍາຍແມງໄມ້ ເປັນປະໂຫຍດ, ເຊື້ອຊີວະວິທະຍາ ແລະ ຜະລິດສານສະໝຸນໄພປາບສັດຕູພືດ ລວມທັງຄລີນິກພືດ;
12. ດຳເນີນການສຳຫຼວດ ແລະ ຈັດການຄວາມສ່ຽງຈາກການນຳໃຊ້ຢາປາບສັດຕູພືດ ເປັນຕົ້ນຢາຂ້າແມງໄມ້ ຢາຂ້າຫຍ້າ, ຂ້າຫອຍ, ຂ້າໜູ ແລະ ອື່ນໆ ທີ່ມີຜົນກະທົບຕໍ່ຄົນ, ສັດ ແລະ ສະພາບແວດລ້ອມ;
13. ສ້າງແຜນ, ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກ ຂອງຂະແໜງ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ຂອງສູນ ໃຫ້ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ ເປັນປົກກະຕິ ແລະ ທັນເວລາ;
14. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

ມາດຕາ 9 ໜ້າທີ່ ຂອງຂະແໜງລ້ຽງສັດ

ຂະແໜງລ້ຽງສັດ ມີໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍແຜນດຳເນີນງານຂອງສູນໃຫ້ເປັນແຜນການ, ໂຄງການ, ກິດຈະກຳ ເພື່ອຈັດຕັ້ງປະຕິບັດຕາມພາລະບົດບາດໜ້າທີ່ຂອງຕົນ ໃຫ້ປະກົດຜົນເປັນຈິງ;
2. ທົດສອບ, ທົດລອງ, ສຶກສາ, ສາທິດ ແລະ ພັດທະນາ ເຕັກນິກການລ້ຽງສັດທີ່ທັນສະໄໝ, ການເລືອກເຟັ້ນແນວພັນທີ່ເໝາະສົມ, ການຜະລິດອາຫານສັດຈາກແຫຼ່ງທຳມະຊາດ, ການປະສົມພັນທຽມ ແນໃສ່ຍົກສະມັດຕະພາບ ແລະ ຄຸນນະພາບຂອງຜະລິດຕະພັນ ເຊັ່ນ: ແນວພັນງົວ, ສັດນ້ຳ, ສັດປີກ ແລະ ອື່ນໆ ແລະ ແນວພັນສັດທີ່ຢູ່ໃນບັນຊີສົ່ງເສີມການຜະລິດ ທົດແທນການນຳເຂົ້າ ແລະ ບັນຊີສັດ ທີ່ມີການເຊັນສັນຍາສຸຂານາໄມ ກັບປະເທດ ສປ ຈີນ ແລະ ປະເທດອື່ນໆ ຢູ່ພາຍໃນສູນ, ຄອບຄົວຕົວແບບ ເພື່ອເປັນບ່ອນຮຽນຮູ້, ຖອດຖອນບົດຮຽນໃຫ້ແກ່ຊາວກະສິກອນ, ກຸ່ມຜູ້ຜະລິດ, ສະຫະກອນ, ຜູ້ປະກອບການ ແລະ ນັກຮຽນ-ນັກສຶກສາ;
3. ຜະລິດ-ສະໜອງ ແລະ ບໍລິການ ດ້ານແນວພັນງົວ, ສັດນ້ຳ, ສັດປີກ, ເຕັກນິກ-ເຕັກໂນໂລຊີກະສິກຳທີ່ດີກ່ຽວກັບສັດ ທີ່ນອນໃນບັນຊີສົ່ງເສີມການຜະລິດ ທົດແທນການນຳເຂົ້າ ແລະ ບັນຊີສັດ ທີ່ມີການເຊັນສັນຍາສຸຂານາໄມ ກັບປະເທດ ສປ ຈີນ ແລະ ປະເທດອື່ນໆ ໃຫ້ຄອບຄົວຕົວແບບ, ຊາວກະສິກອນ, ກຸ່ມຜູ້ຜະລິດ, ສະຫະກອນ ແລະ ຜູ້ປະກອບການ;
4. ສ້າງ ແລະ ພັດທະນາ ພື້ນຖານໂຄງລ່າງ, ວັດຖຸເຕັກນິກ ແລະ ເຄື່ອງມື ເພື່ອນຳໃຊ້ເຂົ້າໃນ ວຽກງານສຶກສາຄົ້ນຄວ້າ, ທົດສອບ, ສາທິດ, ວິໄຈ, ຢັ້ງຢືນທາງດ້ານວິທະຍາສາດ ລວມທັງຖ່າຍທອດເຕັກນິກວິຊາການ ແລະ ແລກປ່ຽນບົດຮຽນໃຫ້ແກ່ຊາວກະສິກອນ, ຜູ້ປະກອບການ, ນັກຮຽນ, ນັກວິໄຈ ເຊັ່ນ: ພັດທະນາຫ້ອງວິໄຈ ແລະ ຢັ້ງຢືນຄຸນນະພາບ ຂອງຜະລິດຕະພັນສັດ ຈາກໂຮງຂ້າສັດ, ຟາມລ້ຽງສັດ ແລະ ຕ່າງປະເທດ;
5. ປະສານ, ອຳນວຍຄວາມສະດວກ ແລະ ຮ່ວມມືກັບອົງການຄຸ້ມຄອງທີ່ກ່ຽວຂ້ອງ ຂອງປະເທດ ສປ ຈີນ ໃນການກວດກາ ເພື່ອຮັບຮອງລະບົບການວິໄຈ ສຳລັບຜະລິດຕະພັນສັດ ແລະ ສານປົນເປື້ອນ ພ້ອມທັງກຳນົດກົນໄກປະຕິບັດການ ດ້ານວິຊາການຮ່ວມກັນ;
6. ແປ ແລະ ຮຽບຮຽງ ເອກະສານມາດຕະຖານສາກົນ ກ່ຽວກັບມາດຕະການດ້ານສຸຂານາໄມ ເປັນພາສາລາວເພື່ອນຳໃຊ້ເຂົ້າໃນການປະຕິບັດວຽກງານຕົວຈິງ; ສ້າງປຶ້ມຕຳລາ, ປຶ້ມຄູ່ມືແນະນຳປະຕິບັດ ດ້ານເຕັກນິກວິຊາການ ກ່ຽວກັບການລ້ຽງສັດ ເປັນຕົ້ນການເລືອກເຟັ້ນແນວພັນທີ່ເໝາະສົມ, ການຜະລິດອາຫານ ຈາກແຫຼ່ງທຳມະຊາດ, ການປະສົມພັນທຽມ ເຊັ່ນ: ແນວພັນງົວ, ສັດນ້ຳ, ສັດປີກ ແລະ ອື່ນໆ, ສ້າງເປັນຄູ່ມືຝຶກອົບຮົມ ແລະ ເຜີຍແຜ່ໃຫ້ສັງຄົມໄດ້ຮັບຮູ້ຢ່າງກວ້າງຂວາງ ໂດຍຜ່ານສື່ຕ່າງໆ ທີ່ສາມາດເຂົ້າເຖິງໄດ້;
7. ປະສານສົມທົບກັບຄູ່ຮ່ວມພັດທະນາ ຈາກປະເທດ ສປ ຈີນ, ຜູ້ປະກອບການ ຫຼື ໂຄງການ ເພື່ອສ້າງລະບົບສາງເຢັນ, ສະຖານທີ່ຄັດເງດ, ຫຸ້ມຫໍ່, ອະນາໄມຂ້າເຊື້ອ ລວມທັງເຄື່ອງກົນຈັກການກະເສດ ເພື່ອສຶກສາ ແລະ ສາທິດ ໃຫ້ແກ່ຜູ້ຜະລິດ, ຜູ້ປະກອບການ ແລະ ຊາວກະສິກອນ;
8. ພັດທະນາ ຫ້ອງປະຕິບັດການ, ສະຖານທີ່ ແລະ ອຸປະກອນຮັບໃຊ້ ແລະ ໃຫ້ບໍລິການ ດ້ານສັດຕະວະແພດ (ຄລີນິກສັດ) ຮ່ວມກັບພາກສ່ວນກ່ຽວຂ້ອງ;
9. ສ້າງແຜນ, ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກ ຂອງຂະແໜງ ປະຈຳເດືອນ, 3 ເດືອນ, 6 ເດືອນ 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
10. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 10 ໜ້າທີ່ ຂອງຂະແໜງວິໄຈພືດ**

ຂະແໜງວິໄຈພືດ ມີໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍແຜນດຳເນີນງານ ຂອງສູນ ໃຫ້ເປັນແຜນການ, ໂຄງການ, ກິດຈະກຳ ເພື່ອຈັດຕັ້ງປະຕິບັດ ຕາມພາລະບົດບາດໜ້າທີ່ ຂອງຕົນ ໃຫ້ປະກົດຜົນເປັນຈິງ;
2. ສ້າງ ແລະ ພັດທະນາ ພື້ນຖານໂຄງລ່າງ, ວັດຖຸເຕັກນິກ ແລະ ເຄື່ອງມື ເພື່ອນຳໃຊ້ເຂົ້າໃນ ວຽກງານສຶກສາ ຄົ້ນຄວ້າ, ທົດສອບ, ສາທິດ, ຖ່າຍທອດເຕັກນິກວິຊາການ ແລະ ແລກປ່ຽນບົດຮຽນໃຫ້ແກ່ຊາວກະສິກອນ, ຜູ້ປະກອບການ, ນັກຮຽນ, ນັກວິໄຈ ເຊັ່ນ: ພັດທະນາ ຫ້ອງວິໄຈແມງໄມ້, ວິໄຈພະຍາດພືດ, ວິໄຈສານພິດຕົກຄ້າງ ແລະ ຄຸນນະພາບປັດໄຈການຜະລິດ ຝຸ່ນ, ຢາປາບສັດຕູພືດ, ວັດສະດຸປູກ, ນໍ້າ ແລະ ດິນ;
3. ປະສານ, ອຳນວຍຄວາມສະດວກ ແລະ ຮ່ວມມື ກັບອົງການຄຸ້ມຄອງທີ່ກ່ຽວຂ້ອງ ຂອງປະເທດ ສປ ຈີນ ໃນການກວດກາ, ຮັບຮອງລະບົບການວິໄຈ ສຳລັບພືດ, ຜະລິດຕະພັນພືດ, ປັດໄຈການຜະລິດ, ສານພິດຕົກຄ້າງ ແລະ ອື່ນໆ ພ້ອມທັງກຳນົດກົນໄກປະຕິບັດການ ດ້ານວິຊາການຮ່ວມກັນ;
4. ແປ ແລະ ຮຽບຮຽງ ເອກະສານມາດຕະຖານສາກົນ ກ່ຽວກັບມາດຕະການດ້ານສຸຂານາໄມພືດ ເປັນພາສາ
5. ລາວ ເພື່ອນຳໃຊ້ເຂົ້າໃນການປະຕິບັດວຽກງານຕົວຈິງ; ພັດທະນາ ແລະ ສ້າງປຶ້ມຄູ່ມືແນະນຳປະຕິບັດ ດ້ານເຕັກນິກວິຊາການ ກ່ຽວກັບການວິໄຈພືດ, ພະຍາດແມງໄມ້ຊະນິດຕ່າງໆ; ສ້າງເປັນຄູ່ມືໃນການຝຶກອົບຮົມ ແລະ ເຜີຍແຜ່ ຢ່າງກວ້າງຂວາງ ໂດຍຜ່ານສື່ຕ່າງໆ ທີ່ສາມາດເຂົ້າເຖິງໄດ້;
6. ສຳຫຼວດເກັບຕົວຢ່າງ ແລະ ວິເຄາະຄວາມສ່ຽງພະຍາດພືດ ທີ່ເປັນສິນຄ້າບຸລິມາສິດ ສົ່ງອອກໄປຕ່າງປະເທດ ຢູ່ບັນດາແຂວງ ເປົ້າໝາຍ; ສຶກສາຄວາມຫຼາກຫຼາຍ ຂອງພະຍາດພືດຮ່ວມກັບຊ່ຽວຊານ ທັງພາຍໃນ ແລະ ຕ່າງປະເທດ; ການວິໄຈ ແລະ ການເກັບຮັກສາຕົວຢ່າງພະຍາດພືດ ໃຫ້ໄດ້ມາດຕະຖານສາກົນ;
7. ດຳເນີນການສຳຫຼວດ, ເກັບຕົວຢ່າງ, ວິໄຈ ເພື່ອສ້າງຖານຂໍ້ມູນ ສັດຕູພືດ ຂອງພືດເສດຖະກິດແຕ່ລະຊະນິດ ທີ່ມີເປົ້າໝາຍສົ່ງອອກ ໂດຍສະເພາະປະເທດ ສປ ຈີນ ລວມທັງຕິດຕາມ, ເຝົ້າລະວັງ ສະຖານະພາບສັດຕູພືດ ເພື່ອປັບປຸງຖານຂໍ້ມູນສັດຕູພືດ ຢ່າງເປັນປົກກະຕິ;
8. ຕິດຕາມ, ເຝົ້າລະວັງ ການປົນເປື້ອນ, ການຕົກຄ້າງ ຂອງຢາປາບສັດຕູພືດ, ສານເຄມີ ແລະ ຈຸລິນຊີ ຢູ່ໃນພືດຜັກ, ໝາກໄມ້ສົດ ລວມທັງປັດໄຈການຜະລິດຕ່າງໆ ຢູ່ຟາມປູກພືດ OA/GAP, ຕະຫຼາດສົດ ແລະ ດ່ານນຳເຂົ້າ ຕາມການມອບໝາຍ ຂອງພາກສ່ວນກ່ຽວຂ້ອງ ພ້ອມທັງແຈ້ງຜົນການກວດສອບ ໃຫ້ໜ່ວຍງານກ່ຽວຂ້ອງຊາບ ດ້ານຄວາມປອດໄພ ຕໍ່ຜູ້ບໍລິໂພກ ເພື່ອເປັນຂໍ້ມູນເຜີຍແຜ່ໃຫ້ສັງຄົມຊາບ ຢ່າງເປັນປົກກະຕິ;
9. ເກັບສຸ່ມຕົວຢ່າງ, ກວດກາ, ວິໄຈ ແລະ ຢັ້ງຢືນຄຸນນະພາບ ຜະລິດຕະພັນພືດ ແລະ ປັດໄຈການຜະລິດຕ່າງໆ ທີ່ຜະລິດພາຍໃນປະເທດ ແລະ ນຳເຂົ້າຈາກຕ່າງປະເທດ;
10. ສ້າງ ແລະ ພັດທະນາ ສະຖານທີ່ທົດສອບສັດຕູພືດ PEQ Green house ເພື່ອຕິດຕາມ, ກວດກາ ພະຍາດພືດ ທີ່ມີຄວາມສ່ຽງສູງ ຫຼື ສັດຕູພືດຕ່າງແດນ ທີ່ອາດຕິດແປດມາກັບແນວພັນ ແລະ ຊິ້ນສ່ວນພັນພືດ ທີ່ປະສົງຈະນຳມາປູກ ແລະ ຂະຫຍາຍພັນ;
11. ສ້າງ ແລະ ພັດທະນາ ລະບົບການກວດກາ-ຢັ້ງຢືນ ແບບອອນໄລ: E-phyto ແລະ E-generic system ທີ່ສາມາດເຊື່ອມໂຍງ ກັບກົມປູກຝັງ ແລະ ດ່ານກວດກາພືດ ຂອງ 5 ແຂວງ ພາກເໜືອ ໃນການກວດກາ-ຢັ້ງຢືນ ໃຫ້ໄດ້ຈຳນວນແນວພັນພືດ ທີ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ກຳນົດສົ່ງອອກ;

12. ປະສານສົມທົບກັບບັນດາຫ້ອງວິໄຈ ພາຍໃນ ແລະ ປະເທດອ້ອມຂ້າງ ເພື່ອເຊື່ອມໂຍງ ແລະ ແລກປ່ຽນນັກວິໄຈ ກັບສະຖາບັນທີ່ກ່ຽວຂ້ອງ ຂອງປະເທດ ນຳເຂົ້າ ແລະ ສົ່ງອອກ;
13. ຄົ້ນຄ້ວາ ກົນໄກບໍລິການ ແລະ ສ້າງລະບຽບການ ຄຸ້ມຄອງນຳໃຊ້ ຫ້ອງວິໄຈພືດ ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການ ສົ່ງອອກ ແລະ ນຳເຂົ້າ ຜົນຜະລິດກະສິກຳ;
14. ຄົ້ນຄວ້າ ສ້າງລະບົບຖານຂໍ້ມູນ, ເກັບກຳ ແລະ ກົນໄກການລາຍງານ ກ່ຽວກັບຂໍ້ມູນການວິໄຈພືດ ໃນຄວາມຮັບຜິດຊອບ ຕໍ່ກັບຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ ເປັນປົກກະຕິ;
15. ສ້າງແຜນ, ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກ ຂອງຂະແໜງ ປະຈຳເດືອນ, 3 ເດືອນ, 6 ເດືອນ 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
16. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 11 ຫຼັກການ

ສູນສາທິດ ແລະ ບໍລິການ ເຕັກນິກກະສິກຳ ຮ່ວມມື ລາວ-ຈີນ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມ ຂອງສູນສາທິດ ແລະ ບໍລິການເຕັກນິກກະສິກຳ ຮ່ວມມື ລາວ-ຈີນ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ພະນັກງານ-ລັດຖະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານ ແມ່ນອີງໃສ່ລະບຽບກົດໝາຍ ແລະ ຫຼັກການລວມຂອງພັກ-ລັດ; ນຳເອົາແນວທາງນະໂຍບາຍຂອງພັກ-ລັດຖະບານ ແລະ ນຳເອົາແຜນການປະຈຳປີ, ແຜນ 5 ປີ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

### ມາດຕາ 12 ແບບແຜນວິທີເຮັດວຽກ

ສູນສາທິດ ແລະ ບໍລິການເຕັກນິກກະສິກຳ ຮ່ວມມື ລາວ-ຈີນ ມີແບບແຜນວິທີການເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນງານ, ແຜນການ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍ ໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບພາກສ່ວນກ່ຽວຂ້ອງ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້-ຜົນເສຍຂອງວຽກງານ ພ້ອມທັງປະຕິບັດລາຍງານສ່ອງແສງ ຢ່າງເຂັ້ມງວດ;
3. ເຮັດວຽກຕ້ອງຕິດພັນກັບຮາກຖານ, ຕິດພັນກັບຕົວຈິງ, ຕິດພັນກັບຄະນະພັກ, ຄະນະນຳແຕ່ລະຂັ້ນ ເພື່ອຊຸກຍູ້, ຕິດຕາມ, ກວດກາ, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາດ້ານດີ-ດ້ານອ່ອນ, ສະຫຼຸບ, ລາຍງານຂໍຄຳເຫັນ ໃນການຈັດຕັ້ງປະຕິບັດແຜນການ ແຕ່ລະໄລຍະ;
4. ຫົວໜ້າສູນ ມີຄວາມຮັບຜິດຊອບໂດຍກົງ ຕໍ່ລັດຖະມົນຕີ ແລະ ຮອງລັດຖະມົນຕີ ຜູ້ຊີ້ນຳ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ; ຮອງຫົວໜ້າສູນ

ມີໜ້າທີ່ຊ່ວຍວຽກ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ມອບໝາຍຂອງຫົວໜ້າສູນ;

5. ຫົວໜ້າສູນ ເປັນຜູ້ລົງລາຍເຊັນ ຕໍ່ບັນດາເອກະສານສຳຄັນ, ໃນເວລາຫົວໜ້າສູນ ຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າສູນທ່ານໃດທ່ານໜຶ່ງ ຮັກສາການແທນ ແລະ ຜູ້ຮັກສາການແທນຕ້ອງລາຍງານວຽກ ທີ່ຕົນເອງໄດ້ແກ້ໄຂ ແລະ ວຽກທີ່ຍັງຄົງຄ້າງໃຫ້ຫົວໜ້າສູນຊາບ ພາຍຫຼັງກັບມາປະຈຳການ;
6. ປະຕິບັດລະບອບປະຊຸມ ປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ແລະ ປະຕິບັດລະບອບລາຍງານ ໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນປົກກະຕິ;
7. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 13 ງົບປະມານ ແລະ ຕາປະທັບ**

ສູນສາທິດ ແລະ ບໍລິການເຕັກນິກກະສິກຳ ຮ່ວມມື ລາວ-ຈີນ ມີງົບປະມານ ແລະ ມີຕາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 14 ການຈັດຕັ້ງປະຕິບັດ**

ສູນສາທິດ ແລະ ບໍລິການ ເຕັກນິກກະສິກຳ ຮ່ວມມືລາວ-ຈີນ, ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຂະແໜງກະສິກຳ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 15 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ ແລະ ນຳໃຊ້ປ່ຽນແທນຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສູນສາທິດ ແລະ ບໍລິການເຕັກນິກກະສິກຳ ຮ່ວມມື ລາວ-ຈີນ ສະບັບເລກທີ 1733/ກປ, ລົງວັນທີ 05 ພຶດສະພາ 2022.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ລັດຖະມົນຕີ

**ປອ. ລິນຄຳ ດວງສະຫວັນ**